# ສິທຂອງທ່ານ

## ທີ່ຈະໄດ້ລັບການບໍຣິການຮັກສາສຸຂະພາບໂຣຄຈິຕ
## ໃນພາສາທີ່ທ່ານເຂົ້າໃຈ




ແຕ່ງຂຶ້ນໂດຍ

ບໍຣິສັດ ການປ້ອງກັນ & ການໃຫ້ຄຳປຶກສາທາງກົດໝາຍ

**(Protection & Advocacy, Inc.)**
**1-800-776-5746**

ພິມເຜີຍແຜ່ **#5380.12 –** ເດືອນ ພຶສະພາ **2002**

Note: When this publication was originally published, we were known as Protection & Advocacy, Inc. (PAI). In October 2008, we changed our name from PAI to Disability Rights California.

ບໍລິສັດການປ້ອງກັນ & ໃຫ້ຄຳປຶກສາກົດໝາຍ (Protection & Advocacy, Inc.) (PAI), ເປັນອົງການຈັດຕັ້ງເອກະຊົນ ທີ່ບໍ່ຫາຜົນກຳໄລ. ບໍລິສັດ PAI ເຮັດວຽກເປັນຜູ້ຫຸ້ນສ່ວນກັບຄົນທີ່ເປັນພິການ – ເພື່ອປ້ອງກັນ, ໃຫ້ຄຳປຶກສາເພື່ອ ແລະຄວາມຄືບໜ້າວ່າດ້ວຍສິທທິມະນຸສທັມ, ຖືກຕ້ອງຕາມກົດໝາຍ ແລະການບໍລິການ. ພວກເຮົາພະຍາຍາມຕໍ່ສູ້ກັບສັງຄົມຊຶ່ງໃຫ້ຄຸນຄ່າກັບໝົດທຸກຄົນແລະອຸ້ມຊູສິທທິຂອງເຂົາເຈົ້າທາງກຽດຕິຍົດ, ອິສຣະພາບ, ທາງເລືອກ ແລະຄຸນນະພາບຂອງຊີວິດ.

ບໍລິສັດ PAI ຈັດຫາການບໍລິການທາງດ້ານການປຶກສາທີ່ແຕກຕ່າງກັນ, ລວມທັງຂ່າວແລະການສົ່ງຕໍ່, ການຊ່ວຍເຫຼືອດ້ານເທັກນິກ, ແລະການເປັນຕົວແທນໂດຍກົງ. ເພື່ອຄວາມຮູ້ຫຼືການຊ່ວຍເຫຼືອກັບບັນຫາຮີບດ່ວນ, ໃຫ້ໂທຣ໌ເລກ:

# PAI
# ໂທຣ໌ເລກຟຣີ: (800) 776-5746

8:30 ໂມງເຊົ້າ ໄປຫາ 5:00 ໂມງແລງ – ວັນຈັນ ຈົນຮອດ ວັນສຸກ

ຫ້ອງການສູນກາງ
100 Howe Ave., Suite 185-N
Sacramento, CA 95825
ໜ່ວຍກົດໝາຍ (916) 488-9950
ຝ່າຍປົກຄອງ (916) 488-9955
ເລກໂທຣ໌ຄົນພິການ–TTY (800) 719-5798

ຫ້ອງການເຂດເມືອງ ລໍສ ແອນຈີລີສ
3580 Wilshire Blvd., Suite 902
Los Angeles, CA 90010
ເລກໂທຣ໌- (213) 427-8747
ເລກໂທຣ໌ຄົນພິການ–TTY (800) 781-5456

ຫ້ອງການເຂດເມືອງ ແຊ້ນ ດິເອໂກ
1111 Sixth Ave., Suite 200
San Diego, CA 92101
ເລກໂທຣ໌ (619) 239-7681
ເລກໂທຣ໌ຄົນພິການ–TTY (800) 576-9269

ຫ້ອງການເຂດອ່າວເມືອງ ແຊນ ແຟຣນຊິສໂກ
433 Hegenberger Rd., Suite 220
Oakland, CA 94621
ເລກໂທຣ໌- (510) 430-8033
ເລກໂທຣ໌ຄົນພິການ–TTY (800) 649-0154

ບໍລິສັດ PAI ໄດ້ລັບທຶນຊ່ວຍເຫຼືອພາຍໃຕ້ກົດໝາຍວ່າດ້ວຍສິທທິການຊ່ວຍເຫຼືອພັທະນາຄົນພິການ Developmentally Disabled Assistance and Bill of Rights Act, ກົດໝາຍວ່າດ້ວຍການປ້ອງກັນ ແລະ ການໃຫ້ຄຳປຶກສາແກ່ສ່ວນບຸກຄົນທີ່ມີການເຈັບປ່ວຍທາງຈິດ Protection and Advocacy for Individuals with Mental Illness Act, ກົດໝາຍວ່າດ້ວຍການປ້ອງກັນ ແລະ ການໃຫ້ຄຳປຶກສາເພື່ອສິທ ທິສ່ວນບຸກຄົນ Protection and Advocacy for Individual Rights Act, ແລະກົດໝາຍ ວ່າດ້ວຍ ການປ້ອງກັ້ນ ແລະການໃຫ້ຄຳປຶກສາສຳລັບຜູ້ລັບຜົລປະໂຫຽດເງິນບຳເນັດ Protection and Advocacy for Beneficiaries of Social Security Act. ມີແນວຄິດ,ຂໍ້ມູນ, ຄຳແນະນຳຫຼືການສລຸບຜົນໃດໆທີ່ຢາກສະແດງອອກໃນປຶ້ມເຫຼັ້ມນີ້ແມ່ນເປັນປະສົງຂອງຜູ້ແຕ່ງແລະບໍ່ຈຳເປັນທີ່ຈະສົ່ງຜົນສະທ້ອນເຖິງພາບພົດຂອງອົງການຈັດຕັ້ງທີ່ໃຫ້ທຶນຊ່ວຍເຫຼືອແກ່ ບໍລິສັດ PAI ແຕ່ຢ່າງໃດ.

# ສິດຂອງທ່ານ
## ທີ່ຈະໄດ້ຮັບການບໍລິການຮັກສາສຸຂະພາບໂຣຄຈິຕ ໃນພາສາທີ່ທ່ານເຂົ້າໃຈ

ເມື່ອຫາກວ່າທ່ານມີຂອບເຂດຈຳກັດດ້ານພາສາ ຫຼືການຕິດຕໍ່ (ທີ່ວ່າ, ຖ້າຫາກວ່າພາສາເດີມຂອງທ່ານບໍ່ແມ່ນພາສາອັງກິດ, ຖ້າຫາກວ່າທ່ານເປັນຄົນຕາບອດ ຫຼືຫູໜວກ, ຫຼືຖ້າຫາກວ່າທ່ານຕ້ອງການສື່ຊ່ວຍພາທ່ານຕິດຕໍ່) ທ່ານຍັງມີສິດທີ່ເຂົ້າເຖິງການຊ່ວຍເຫຼືອການບໍລິການຮັກສາສຸຂະພາບໂຣຄຈິດ. ທ່ານມີສິດໄດ້ຮັບການບໍລິການເຫຼົ່ານັ້ນໃນພາສາທີ່ທ່ານລົ້ງເຄີຍແລະເຂົ້າໃຈສະດວກດີ. ຕໍ່ໄປນີ້ເປັນຄຳຖາມແລະຄຳຕອບທີ່ພົບໃຊ້ກັນເລື້ອຍໆກ່ຽວກັບສິທໃນການເຂົ້າເຖິງການໃຊ້ພາສາ.

### 1. ຂ້າພະເຈົ້າມີສິທທີ່ຈະໄດ້ຮັບຄວາມຮູ້ກ່ຽວກັບການບໍລິການຮັກສາສຸຂະພາບໂຣຄຈິດໃນພາສາທີ່ຂ້າພະເຈົ້າເຂົ້າໃຈບໍ?

ແມ່ນແລ້ວ. ໂຄງການຮັກສາສຸຂະພາບໂຣຄຈິດມີການບັງຄັບໃຫ້ຈັດຫາການບໍລິການທາງດ້ານການອະທິບາຍແປພາສາ, ແລະເຄື່ອງຊ່ວຍໃຫ້ແກ່ຄົນພິການ. ການອະທິບາຍໝາຍຄວາມວ່າທ່ານໄດ້ຮັບຄວາມຮູ້, ທາງປາກເປົ່າຫຼືທາງເຄື່ອງໝາຍ, ໃນພາສາເດີມຂອງທ່ານ. ການແປພາສາໝາຍຄວາມວ່າທ່ານໄດ້ຮັບຄວາມຮູ້ເປັນລາຍລັກອັກສອນໃນພາສາເດີມຂອງທ່ານ. ເຄື່ອງຊ່ວຍຄົນພິການອາດລວມທັງອຸປະກອນ Brailleເຄື່ອງຂຽນອັກສອນຂອງຄົນຕາບອດ ຫຼືເທັບຟັງສຽງ, ພ້ອມທັງອຸປະກອນຊ່ວຍອັນອື່ນ, ຖ້າຫາກວ່າທ່ານພິການເປັນຄົນຫູໜວກ ຫຼືຕາບອດ.

### 2. ເມື່ອເວລາໃດທີ່ຂ້າພະເຈົ້າມີສິດໄດ້ນາຍພາສາຊ່ວຍ?

ທ່ານມີສິດໄດ້ນາຍພາສາຊ່ວຍແປທຸກໆເທື່ອທີ່ທ່ານຕ້ອງການ. ໃນການໄປຢັ້ງມຢາມຄັ້ງແລກຂອງທ່ານ, ຫ້ອງການຊ່ວຍເຫຼືອຈະຕ້ອງບອກໃຫ້ທ່ານຮູ້ ກຸເປັນກາຍລັກອັກສອນ, ເປັນການໃຊ້ສັນຍານພາສາກືກ, ໃນພາສາທີ່ກຳເນີດຂອງທ່ານ, ຫຼືໃນທາງເຄື່ອງBraille ກ່ຽວກັບສິທທິຂອງທ່ານທີ່ຈະມີນາຍພາສາແປ. ທຸກໆໂຄງການຈະຕ້ອງຕິດປະກາດກ່ຽວກັບຂ່າວໃນບ່ອນທີ່ເປີດເຜີຍ. ຄຳປະກາດແຈ້ງການພັມດ, ຈະເປັນແບບຂຽນຫຼືແບບເວົ້າລົມກັບປາກ, ຈະຕ້ອງອະທິບາຍວິທີການເອົານາຍພາສາມາແປໃຫ້ແລະວິທີການຍື່ນຄຳຟ້ອງຮ້ອງສາມກ່ຽວກັບບັນຫາການບໍລິການນາຍພາສາແປກັບພະແນກການບໍລິການສຸຂະພາບຂອງຣັຄState Department Health Services (DHS).

## 3. ແມ່ນຜູ້ໃດທີ່ເປັນນັກຊ່ຽວຊານໃຫ້ການບໍລິການແປພາສາທາງປາກເປົ່າ?

ນາຍລ່າມແປພາສາແມ່ນໃຜຜູ້ນຶ່ງທີ່ລ່ຽນໄຫຼທາງພາສາອັງກິດແລະພາສາເດີມຂອງທ່ານ. ຄົນຜູ້ນັ້ນຈະຕ້ອງສາມາດເວົ້າໄດ້ຫຼືໃຊ້ພາສາກືກໄດ້, ອ່ານໄດ້, ແລະແປອະທິບາຍເປັນພາສາເດີມຂອງທ່ານຢ່າງໄວວາແລະຢ່າງຖືກຕ້ອງສົມບູນ. ຄວາມຮູ້ລ່ຽນໄຫຼໄດ້ຮຽກຮ້ອງຄວາມຮູ້ທາງພາສາສັບຫຼືເນື້ອໃນທັງສອງພາສາ. ຫ້ອງການຊ່ວຍເຫຼືອຈະບໍ່ໄດ້ຮ້ອງຂໍ, ແນະນໍາ, ຫຼືສນັບສນູນທ່ານຫຼືຄົນອື່ນທີ່ຈໍາກັດຄວາມເຂົ້າໃຈພາສາອັງກິດ (limited English proficiency LEP), .ໃຫ້ໃຊ້ສະມາຊິກໃນຄອບຄົວ, ໝູ່ເພື່ອນ,ຫຼືເດັກອາຍຸບໍ່ເຖິງກະສຽນມາເປັນນາຍພາສາໃຫ້ທ່ານ.

## 4. ຂ້າພະເຈົ້າມີສິທເຮັດວຽກຢ່າງໃກ້ສິດກັບນາຍແປພາສາແລະຜູ້ສໍາພາ ດເລື່ອງສຸຂະພາບໂຣຄຈິດເພື່ອຮັບປະກັນວ່າຂ້າພະເຈົ້າໄດ້ລັບການບໍລິການທີ່ຕົນຢາກໄດ້ແລະຕ້ອງການ?

ມີສິດ. ຖ້າຫາກວ່າຜູ້ສໍາພາດເລື່ອງສຸຂະພາບໂຣຄຈິດຂອງທ່ານຕິດຕໍ່ກັບທ່ານບໍ່ໄດ້ໃນພາສາເດີມຂອງທ່ານ, ນາຍແປພາສາຂອງທ່ານຕ້ອງເປັນຕົວສໍາຄັນໃນການເຮັດວຽກຢ່າງໃກ້ສິດກັບທ່ານແລະຜູ້ສໍາພາດເພື່ອຮັບປະກັນວ່າທ່ານໄດ້ລັບການດູແລທີ່ທ່ານຕ້ອງການ.
ນີ້ເປັນແນວຄິດທີ່ດີທີ່ຕ້ອງຖາມລູກຄ້າຄົນອື່ນຜູ້ທີ່ເວົ້າພາສາດຽວກັນກັບທ່ານເພື່ອ
ຊ່ວຍທ່ານຕັດສິນໃຈວ່າຜູ້ສໍາພາດທ່ານເລື່ອງສຸຂະພາບໂຣຄຈິດຈະມີຄຸນສົມບັດຊ່ວຍທ່ານໄດ້.
ຖ້າຫາກວ່າທ່ານບໍ່ພໍໃຈກັບການສໍາພາດປະເມີນຄວາມຕ້ອງການໂຄງການຮັກສາສຸຂະພາບໂຣຄຈິດຂອງທ່ານ, ທ່ານມີສິທທີ່ຈະຮ້ອງຂໍເອົາຄົນທາງນອກມາສໍາພາດການປະເມີນສ່ວນຕົວເຖິງຄວາມຕ້ອງການ ໂດຍແມ່ນໂຄງການນີ້ເປັນຜູ້ຈ່າຍຄ່າ.

## 5. ເມື່ອເວລາໃດທີ່ຂ້າພະເຈົ້າຈະມີສິທໄດ້ລັບຄວາມຮູ້ທີ່ແປອອກເປັນພາສາເດີມຂອງຂ້າພະເຈົ້າ?

ຜູ້ໃຫ້ການຊ່ວຍເຫຼືອຈະຕ້ອງເອົາເອກະສານທີ່ຂຽນເປັນພາສາເດີມຂອງທ່ານໃຫ້ທ່ານຢ່າງນ້ອຍຫ້າເປີເຊັນຂອງຂອງໂຄງການທີ່ລູກຄ້າຕິດຕໍ່ໃນພາສານັ້ນ.

## 6. ຂ້າພະເຈົ້າມີສິດເອົາການອະທິບາຍ, ການແປພາສາແລະການ ຊ່ວຍເລື່ອງພິການເພື່ອການບໍລິການສ່ວນຕົວຫຼືທີ່ກອງປະຊຸມແຜນການຮັກສາປິ່ນປົວບໍ?

ທ່ານມີສິດທຸກເທື່ອທີ່ຕ້ອງການການອະທິບາຍທາງປາກເປົ່າຫຼືທາງສັນຍານຊື້ພາສາກືກໃນທຸກໆລະດັບຂອງການຮັກສາສຸຂະພາບໂຣຄຈິດຂອງທ່ານ. ນີ້ນລວມທັງການຂົ້ນສານຟັງຄວາມເປັນທັມເລື່ອງການບໍຣິຫານແລະກົດໝາຍແພ່ງ. ຖ້າຫາກວ່າໂຄງການບໍ່ໄດ້ເອົາແຈ້ງການແລະເອກະສານທີ່ແປແລ້ວໃຫ້,ເຂົາຈະຕ້ອງເອົາຄໍາແຈ້ງການທີ່ແປອອກກ່ຽວກັບການໄດ້ມີຜູ້ອະທິບາຍເອກະສານທີ່ເປັນລາຍລັກອັກສອນນັ້ນ,ຈະດ້ວຍທາງປາກເປົ່າ ຫຼືດ້ວຍການໃຊ້ສັນຍານພາສາກືກ, ໂດຍມີນາຍພາສາທີ່ຊໍານານໃນການແປ. ຖ້າຫາກວ່າທ່ານຕ້ອງການເຄື່ອງຊ່ວຍໃຫ້ຄົນພິການຕິດຕໍ່ເຂົ້າໃຈໄດ້, ທ່ານຈະຕ້ອງຖາມຂໍເອົາເຄື່ອງນັ້ນກ່ອນການເຂົ້າປະຊຸມຫຼືກ່ອນການເຂົ້າຫ້ອງສານຟັງຄວາມເປັນທັມ.

## 7. ໂຄງການຮັກສາສຸຂະພາບໂຣຄຈິດມີພາລະໜ້າທີ່ໃນການສຳຣວດຄວາ ມຕ້ອງການດ້ານພາສາຂອງຂ້າພະເຈົ້າບໍ?

ສຳຣວດ. ຢ່າງນ້ອຍປີນຶ່ງເທື່ອນຶ່ງ, ໂຄງການຮັກສາສຸຂະພາບໂຣຄຈິດຈະຕ້ອງພິສູດຫຼັກຖານດັ່ງຕໍ່ລົງໄປນີ້:

- ພາສາໃດທີ່ທ່ານເຄີຍໃຊ້ໃນໂຄງການ
- ມີຄົນທີ່ເວົ້າພາສາອັງກິດຈຳກັດຫຼາຍປານໃດທີ່ມີເງື່ອນໄຂແລະອາດຊື້ໂຄງການ
- ລູກຄ້າຄົນໃດທີ່ຈະຕ້ອງການຄົນແປພາສາ, ຕ້ອງການອກະສານທີ່ແປແລ້ວ, ເຄື່ອຊ່ວຍໃຫ້ຕິດຕໍ່ເຂົ້າໃ ຫຼືເຄື່ອງສັນຍານໃຊ້ພາສາກືກ
- ພາກສ່ວນໃດຂອງໂຄງການຮັກສາສຸຂະພາບໂຣຄຈິດທີ່ຈະຕ້ອງການນາຍພາສາ
- ຊັພະຍາກອນອັນໃດທີ່ເຂົາເຈົ້າຕ້ອງການ – ເປັນຕົ້ນວ່າ ສະຖານທີ່, ການມີພາສາເດີມ ແ/ະການຈັດແຈ່ງໃຫ້

ຫຼັງຈາກນັ້ນໂຄງການຈະຕ້ອງໄດ້ປະເມີນສິ່ງທ່ຕົນຄົ້ນພົບແລະຕັດສິນໃຈ ຖ້າຫາກວ່າຄວາມຊ່ວຍເຫຼືອທີ່ເຂົາເຈົ້າຈັດຫາໃຫ້ນັ້ນຍັງປະກົດມີຢູ່ແລະຍັງຈະເໝາະສົມຫຼືບໍ່, ຫຼືຫາກວ່າທ່ານຕ້ອງການຢາກປ່ຽນແປງມັນ.

## 8. ໂຄງການຮັກສາສຸຂະພາບໂຣຄຈິດຈະຕ້ອງຂຍາຍນະໂຍບາຍເປັນຕົວອັກສອນເພື່ອໃຫ້ຖືກຕ້ອງກັບຄວາມຕ້ອງການທາງພາສາຂອງຂ້າພະເຈົ້າຢູ່ບໍ? ເຂົາເຈົ້າຈະຕ້ອງໃຫ້ການສຶກສາອົບຮົມແກ່ພະນັກງານຂອງເຂົາ ກ່ຽວກັບຄວາມ ຕ້ອງການຂອງຂ້າພະເຈົ້າຢູ່ບໍ?

ຕ້ອງຂຍາຍ. ຜູ້ຊ່ວຍເຫຼືອຈະຕ້ອງປະກອບສິ່ງຕໍ່ລົງໄປນີ້ໃຫ້ເປັນລາຍລັກອັກສອນ:

- ໃບແຈ້ງການໄປຫາຜູ້ຄົນທີ່ເວົ້າພາສາອັງກິດໄດ້ແບບຈຳກັດ – ເປັນພາສາເດີມຂອງເຂົາເຈົ້າ – ກ່ຽວກັບສິທທີ່ຈະໄດ້ລັບຄວາມຊ່ວຍເຫຼືອດ້ານພາສາໂດຍບໍ່ເສັງຄ່າ
- ການແປ/ອະທິບາຍຕ້ອງລ່ຽນໄຫຼຄ່ອງແຄ້ວ – ທາງປາກເປົ່າແລະສັນຍານພາສາກືກ
- ການແປອຸປະກອນທີ່ເປັນເອກະສານລາຍລັກອັກສອນ
- ພະນັກງານໄດ້ລັບການອົບຮົມຮ່ຳຮຽນເຣື່ອງນະໂຍບາຍແລະພິທີດຳເນີນການລກົດຣະບຽບຂອງຜູ້ເວົ້າພາສາອັງກິດໄດ້ແບບຈຳກັດ (ສຳຣວດຄວາມຮູ້ຂອງພະນັກງານໃນແຕ່ລະປີ).
- ມີຫັງເກີດຂຶ້ນ?

## 9. ຂ້າພະເຈົ້າຈະເຮັດອັນໃດຖ້າຫາກວ່າໂຄງການບໍ່ໄດ້ຈັດຫາພາສາທີ່ຂ້າພະເຈົ້າຕ້ອງການໃຫ້ໄດ້?

ຖ້າຫາກວ່າໂຄງການຮັກສາສຂະພາບໂຣຄຈິດບໍ່ໄດ້ຈັດຫາການລ່ວງອັນມີຄວາມໝາຍບົນພື້ນຖານພາສາທີ່ທ່ານຕ້ອງການ, ທ່ານສາມາດປະກອບແລະຍື່ນຄຳຟ້ອງຮ້ອງ. ຖ້າຫາກວ່າທ່ານປະກອບແລະຍື່ນຄຳຟ້ອງຮ້ອງ, ຫ້ອງການວ່າດ້ວຍສິທທິຊົນ Office of Civil Rights ຈະພິຈາຣະນາກ່ຽວກັບຄຳຖາມຕໍ່ລົງໄປນີ້ ໃນການຕັດສິນເຣື່ອງການຈຳແນກທີ່ທ່ານຟ້ອງຮ້ອງມາ:

- ໂຄງການກວ້າງໃຫຍ່ປານໃດ?
- ໄດ້ມີລູກຄ້າຫຼາຍປານໃດໃນເຂດໂຄງການ?
- ເຂົາເຈົ້າມາຕິດຕໍ່ກັບໂຄງການນີ້ເລື້ອຍໆບໍ?
- ພາສາທີ່ທ່ານຕ້ອງການໄດ້ຖືກໃຊ້ຢູ່ເລື້ອຍໆບໍ?
- ທັມມະຊາດຂອງໂຄງການແມ່ນຫັຽງ?
- ຈຸດປະສົງຕ່າງໆຂອງໂຄງການແມ່ນຫັຽງ?
- ຊັພະຍາກອນໄວ້ໃຫ້ທັງໝົດມີອັນໃດແດ່?

## 10. ຂ້າພະເຈົ້າສາມາດປະກອບຍື່ນຄຳຟ້ອງຮ້ອງໄດ້ບໍ ຖ້າຫາກວ່າໂຄງການຮັກສາສຸຂະພາບໂຣຄຈິດບໍ່ຈັດຫາຄວາມສະດວກທີ່ເຕັມໄປດ້ວຍຄວາມໝາຍ?

ປະກອບຍື່ນໄດ້. ໂຄງການບໍຣິການທາງສັງຄົມຫຼາຍແຫ່ງໄດ້ລັພົນຈາກຣັຖບາລກາງ ກະຊວງອະນາໄມ & ການບໍຣິການບຸກຄົນ Department of Health & Human Services (DHHS). ກົດໝາຍໄດ້ໃຫ້ຄວາມສະດວກຢ່າງສເມີພາບແລະຄືວເຖິງແກ່ທຸ.ທ ໂຄງການ. ຫ້ອງການສິທທິຊົນ Office of Civil Rights (OCR) ບັງຄັບໃຊ້ກົດໝາຍເຊັ່ນນີ້.

ທ່ານຈະຕ້ອງປະກອບຍື່ນຄຳຟ້ອງຮ້ອງເປັນລາຍລັກອັກສອນຂຽນຟ້ອງຂຶ້ນໄປພາຍໃນ 180 ມື້ຈາກວັນທີເດືອນປີທີ່ມີເຫດການທີ່ທ່ານຮູ້ສຶກວ່າເປັນການຈຳແນກເກີດຂຶ້ນ. ທ່ານສາມາດເອົາຟອມຂໍຟ້ອງຮ້ອງຈາກຫ້ອງການສິທທິຊົນ OCR ຫຼືທ່ານສາມາດສົ່ງໜັງສືທີ່ມີແຈ້ງການຂ່າວລວມຢູ່ນຳດັ່ງນີ້:

- ຊື່ແລະນາມສະກຸນຂອງທ່ານ, ທີ່ຢູ່ແລະເລກໂທຣະສັບຂອງທ່ານ, ຫຼືຊື່ຂອງທີ່ປຶກສາທາງກົດໝາຍ, ທີ່ຢູ່ແລະເລກໂທຣ໌ຂອງເຂົາເຈົ້າ
- ຊື່ແລະທີ່ຢູ່ຂອງໂຄງການທີ່ທ່ານກຳລັງຟ້ອງຮ້ອງເຖິງຢູ່
- ເຫດການເຣື່ອງຈຳແນກເກີດຂຶ້ນຢູ່ທີ່ໃດແລະເມື່ອເວລາໃດ?
- ມີຫັຽງເກີດຂຶ້ນ?

ແມ່ນຫັຽງທີ່ເກີດຂຶ້ນ? ຫຼືກຖານຂໍ້ມູນອັນອື່ນໆທີ່ທ່ານຄິດວ່າສຳຄັນ

ໃຫ້ສົ່ງຍື່ນຄຳຟ້ອງຮ້ອງຂອງທ່ານໄປທີ່:


Region IX OCR
Ira Pollack, Regional Manager
U.S. DHHS Office for Civil Rights
50 United Nations Plaza, Room 322
San Francisco, CA 94102

**11.** ແມ່ນຫຍັງຈະເກີດຂຶ້ນເມື່ອເວລາຫ້ອງການສິທທິຊົນ **OCR** ສືບສວນຄະດີການຟ້ອງຮ້ອງຂອງທ່ານ?

ຫ້ອງການສິທທິຊົນ OCR ຊ່ວຍແກ້ໄຂຄະດີການຈຳແນກຂອງທ່ານດ້ວຍການເປັນຜູ້ເກັ້ງກ່ອມ. ຫ້ອງການສິທທິຊົນ OCR ຍັງຈະກວດຂັ້ນທຸກໆຂໍ້ຕົກລົງເຫັນດີຣະຫວ່າງທ່ານແລະໂຄງການ. ຖ້າຫາກວ່າໂຄງການຮັກສາສຸຂະພາບໂຣຄຈິດປະຕິເສດບໍ່ປະຕິບັດຕາມຂໍ້ຕົກລົງ, ຫ້ອງການສິທທິຊົນ OCR ຈະຕັດທຶນຊ່ວຍເຫຼືອຂອງຣັຖະບານກາງ ຫຼືສົ່ງຄະດີນີ້ໄປຍັງກະຊວງຍຸຕິທັມເພື່ອຕໍ່ສູ້ຄະດີຄວາມກັນ.

**12.** ຂ້າພະເຈົ້າມີຄວາມຢ້ານກົວເຣື່ອງການສູ້ຄະດີຄືນຫຼືການຖືກຂູ່ຂວັນ ຖ້າຫາກວ່າຂ້າພະເຈົ້າປະກອບຍື່ນຄຳຟ້ອງຮ້ອງກັບຫ້ອງການ ສິທທິຊົນ **OCR.** ຂ້າພະເຈົ້າຈະສາມາດໄດ້ລັບການຄຸ້ມກັນຢ່າງໃດ?

ທ່ານຈະຕ້ອງລຸກຂຶ້ນໃຊ້ສິທຂອງທ່ານ. ລອງຊອກຫາທະນາຍຄວາມເພື່ອເຮັດວຽກກັບທ່ານ. ຖ້າຫາກວ່າທ່ານສືບຕໍ່ໃຊ້ສິດຂອງທ່ານຢ່າງແທ້ຈິງ ມັນກໍຈະບໍ່ຄ້າຍຄືວ່າທ່ານຖືກເຝົ້າຣົບກວນຢ່າງແນ່ນອນ. ທ່ານຍັງສາມາດສືບຕໍ່ຍື່ນຄຳຟ້ອງຮ້ອງ ແລະຕິດຕໍ່ຕົວແທນຄະນະຣັຖະບານທ້ອງຖິ່ນຂອງທ່ານໄດ້ອີກ.

**13.** ມີຫຍັງອີກບໍ່ທີ່ຂ້າພະເຈົ້າສາມາດເຮັດໄດ້ເພື່ອຮັບປະກັນວ່າຕົນໄດ້ມີການ ຊ່ວຍເຫຼືອດ້ານພາສາຢ່າງທົ່ວເຖິງ?

ຖ້າຫາກວ່າທ່ານໄດ້ລັບປະກັນພັຍຮັກສາສຸຂະພາບຂອງຣັຖແຄລີຟໍເນັງMedi-Cal, ທ່ານສາມາດປະກອບຍື່ນຄຳຟ້ອງຮ້ອງກັບຜູ້ອຳນວຍການຫ້ອງການຮັກສາສຸຂະພາບໂຣຄຈິດຢູ່ໃນກົ່ງຣັຖຂອງທ່ານ. ໃຫ້ເປັນຜູ້ທີ່ຝັ່ງແໜ້ນ! ລຸກຂຶ້ນໃຊ້ສິທຂອງຕົນ. ບໍ່ມີຜູ້ໃດຢາກຈະໃຊ້ເງິນຂອງຣັຖບານທີ່ໃຫ້ທຶນແກ່ໂຄງການຊຶ່ງມີການຈຳແນກຕໍ່ຜູ້ຄົນທີ່ຕ້ອງການຄວາມຊ່ວຍເຫຼືອນັ້ນ.